## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 25 ກຸມພາ 2024 (02-25-2024)

---

## ຄວາມເຊື່ອທີ່ເຕີບໃຫຍ່

**ຈຸດສໍາຄັນໃນບົດຮຽນ:** ຄວາມເຊື່ອຈະເຕີບໃຫຍ່ຂຶ້ນເມື່ອພວກເຮົາເຊື່ອຟັງພຣະເຈົ້າດ້ວຍຄວາມຖ່ອມຕົວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ນຶ່ງໃນພາກສ່ວນທີ່ຍາກລໍາບາກທີ່ສຸດຂອງປະສົບການການເປັນພໍ່ແມ່ເກີດຂຶ້ນປະມານປີທີ່ສິບຫ້າ ຫຼືສິບຫົກກ່ຽວກັບການຂັບຣົດ. ພໍ່ແມ່ຍ້າຍໄປທີ່ບ່ອນນັ່ງຜູ້ໂດຍສານ, ແລະລູກຊາຍຫຼືລູກສາວນັ່ງຢູ່ຫຼັງພວງມາໄລ (steering wheel). ທ່ານລືມວ່າມີຈັກຊິ້ນສ່ວນທີ່ເຄື່ອນທີ່ຢູ່ໃນວິທີການຮຽນຮູ້ການຂັບລົດນີ້. ປ້າຍຈະຣາຈອນ, ການປ່ຽນເລນ, ໄຟຈະຣາຈອນ, ຄັນເລັ່ງ, ບເຣກ, ການອອກຈາກທາງນ້ອຍຮວມເຂົ້າໄປທາງໃຫຍ່(yielding), ການລະວັງ, ແລະສິ່ງທີ່ສໍາຄັນທີ່ສຸດແມ່ນການຢຸດ. ທ່ານໄດ້ເຮັດມັນມາເປັນເວລາຫຼາຍທົດສະວັດແລ້ວ ແລະຕອນນີ້ທ່ານຖືກມອບໝາຍໜ້າທີ່ສອນໃຫ້ລູກຂອງທ່ານບາງສິ່ງບາງຢ່າງທີ່ເປັນທັມມະຊາດທີສອງສໍາລັບທ່ານ. ພວກເຮົາເຫັນຕົວເອງເປັ່ງສຽງອຸທານອອກມາ: "**ໄປ! ໄປ! ໄປ!**" "**ໂອ້ວ! ໂອ້ວ! ໂອ້ວ!**" "**ດຽວນີ້!**" "**ຢ່າເລື່ອນລອຍ!**" ແລະຄໍາໂປດຂອງລູກຊາຍທັງສີ່ຂອງຂ້າພະເຈົ້າ: "**ແມ່ນຫຍັງນໍ! ແມ່ນຫຍັງນໍ! ແມ່ນຫຍັງນໍ!**" ພວກເຂົາເຈົ້າຍັງພາກັນເວົ້າຢອກຂ້າພະເຈົ້າກັບຄໍາເວົ້ານີ້.

ໃນພຣະຄັມພີ ລູກາ ບົດທີ່ 17, ພຣະເຢຊູໄດ້ຊົງຕຽມຕົວທີ່ຈະມອບລູກກຸນແຈໃຫ້ແກ່ບັນດາສາວົກທີ່ພວມຈະເລີ່ມຕົ້ນ. ພຣະອົງຊົງພວມກົດດັນພວກເຂົາເຈົ້າໄປສູ່ຄວາມເຊື່ອທີ່ເຕີບໃຫຍ່. <u>ພວກເຮົາຈໍາເປັນຕ້ອງຮັບຟັງແລະຮຽນຮູ້ວ່າຄວາມເຊື່ອທີ່ເຕີບໃຫຍ່ນັ້ນແມ່ນກ່ຽວກັບຫຍັງ</u>. ເຫດການອັນໃດໃນຊີວິດຂອງທ່ານທີ່ເຮັດໃຫ້ທ່ານຮູ້ສຶກຄືກັບວ່າທ່ານໄດ້ປະສົບກັບ "ການເປັນຜູ້ໃຫຍ່" ໃນທີ່ສຸດ?

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

### 1. <u>ລູກາ 17:1-4</u>

*[1]ພຣະອົງຊົງກ່າວກັບພວກສາວົກຂອງພຣະອົງວ່າ, "ຈໍາເປັນຕ້ອງມີເຫດໃຫ້ເກີດການຫຼົງຜິດ ແຕ່ວິບັດແກ່ຜູ້ທີ່ກໍ່ເຫດໃຫ້ເກີດການຫຼົງຜິດ*
*ນັ້ນ. [2]ຖ້າຈະເອົາຫີນໂມ້ແປ້ງກ້ອນໃຫຍ່ຜູກຄໍຄົນນັ້ນຈົມນໍ້າທະເລເສຍ ກໍດີກວ່າທີ່ຈະເຮັດໃຫ້ຄົນນຶ່ງໃນໝູ່ເລັກນ້ອຍເຫຼົ່ານີ້ເກີດການຫຼົງ*
*ຜິດ. [3]ຈົ່ງລະວັງໃຫ້ດີ "ຖ້າພີ່ນ້ອງເຮັດຜິດບາບ ຈົ່ງຕິຕຽນເພິ່ນ ຖ້າເພິ່ນຫລົບຕັ້ງໃຈໃໝ່ ຈົ່ງຍົກໂທດໃຫ້ເພິ່ນ. [4]ຖ້າແມ່ນເພິ່ນເຮັດຜິດຕໍ່*
*ທ່ານວັນລະເຈັດເທື່ອ ແລະກັບມາຫາທ່ານທັງເຈັດເທື່ອນັ້ນ ແລ້ວເວົ້າວ່າ 'ເຮົາກັບແໜງຕັ້ງໃຈໃໝ່ແລ້ວ' ຈົ່ງຍົກໂທດໃຫ້ເພິ່ນ."*

ມັນອາດຈະເປັນການຍາກທີ່ຈະຊອກຫານັກກິລາບານບ້ວງ (basketball) ທີ່ທີຄວາມກະຕືລືລົ້ນແລະແຂ່ງຂັນໄດ້ຫຼາຍເທົ່າກັບ ກເຣສັນ ແອລເລນ (Grayson Allen). ບຸກຫຼິ້ນຢ່າງໜັກແລະບໍ່ຍອມຢຸດຢັ້ງ, ລາວໄດ້ຊ່ອຍມະຫາວິທຍາລັຍ ດູກ (Duke University) ຄວ້າເອົາແຊມປ້ຽນລະດັບຊາດໃນປີ 2015. ລາວໄດ້ຖືກຂະໜານນາມໃຫ້ເປັນນຶ່ງໃນຜູ້ຫຼິ້ນ ດູກ (Duke players)ທີ່ເກັ່ງທີ່ສຸດຂອງທົດສະວັດ 2010s. ແຕ່ລາວມີຂໍ້ບົກພ່ອງທີ່ສໍາຄັນອັນນຶ່ງ. ລາວມັກຈະໝົກມຸ່ນຢູ່ກັບການແຂ່ງຂັນ ຈົນບາງຄັ້ງລາວອາດທໍາຜິດພາດທີ່ໂງ່ຈ້າແທ້ໆ. ຊື່ສຽງຂອງລາວຖືກທໍາລາຍໂດຍການບີບບັງຄັບຂອງລາວໃຫ້ເຕະສະດຸດກັບຜູ້ຫຼິ້ນອື່ນໆ. ມີບາງສິ່ງບາງຢ່າງໃນຕົວຂອງລາວທີ່ຖືກຫໍ່ຫຸ້ມຢູ່ໃນການຕໍ່ສູ້ ເບິ່ງຄືວ່າລາວບໍ່ສາມາດຊ່ອຍເຫຼືອຕົວເອງເອົາຊະນະການບີບບັງຄັບນັ້ນໄດ້. ເກົ້າສິບເກົ້າສ່ວນຮ້ອຍ(99%)ລາວຈະຫຼິ້ນແບບເໜີດໄຟ (ເຕັມກໍາລັງ), ແຕ່ນຶ່ງສ່ວນຮ້ອຍ (1%)ສຸດທ້າຍເຮັດໃຫ້ບັນດາຜູ້ຊົມ(ແຟນ)ແລະບັນດາຄູຜູ້ຝຶກແອບຜິດຫວັງເໝືອນກັນ.

ຂ້າພະເຈົ້າຄິດວ່າບັນດາຜູ້ຕິດຕາມພຣະຄຣິດທຸກຄົນ, ເປັນບາງຄັ້ງບາງຄາວ, ສາມາດເຊື່ອມຕໍ່ກັບການບັງຄັບອັນຮ້າຍແຮງຂອງ

ກເຣສັນ ແອລເລນ. ໃນບົດຮຽນນີ້ທີ່ພຣະເຢຊູໄດ້ຊົງສອນໃນພຣະຄັມພີ ລູກາ ບົດທີ່ 17, ພຣະເຢຊູໄດ້ຊົງກະຕຸ້ນໃຫ້ພວກສາວົກຂອງພຣະອົງບໍ່ໃຫ້ສະດຸດລົ້ມລົງ, ແລະທີ່ສຳຄັນຍິ່ງໄປກວ່ານັ້ນ ພຣະອົງຊົງເຕືອນພວກເຮົາວ່າມີຫຼາຍສິ່ງຫຼາຍຢ່າງທີ່ອາດເຮັດໃຫ້ພວກເຮົາສະດຸດໄດ້. **ຈົ່ງລະວັງ! ໂອ້ວ!** ແລະຈາກນັ້ນພຣະອົງໄດ້ຊົງລ້ຽວກັບມາເພື່ອຊົງເຕືອນບັນດາຜູ້ຕິດຕາມຂອງພຣະອົງບໍ່ໃຫ້ເປັນແຫຼ່ງທີ່ມາຂອງການສະດຸດ. **ຈົ່ງຢ່າເຮັດໃຫ້ພວກເຂົາສະດຸດ!** ພຣະເຢຊູໄດ້ຊົງໃຊ້ຄຳສັບ "ສະແກນດາລອນ" ("skandalon".) ມັນແມ່ນມາຈາກຄຳນີ້ທີ່ພວກເຮົາມີຄຳສັບວ່າ: "ຂ່າວການກະທຳຜິດ" ("scandal".) ໂດຍພື້ນຖານແລ້ວ, ຄຳເວົ້ານີ້ມີຄວາມໝາຍສອງຢ່າງ: 1. ໄມ້ທີ່ຄົດຄ້ຽວທີ່ໃຊ້ລໍ້ສັດໄດ້, ແລະ 2. ສິ່ງໃດກໍ່ຕາມທີ່ສາມາດເຮັດໃຫ້ໃຜຜູ້ນຶ່ງສະດຸດໄດ້. ທັງສອງຄວາມໝາຍໃຊ້ໄດ້ທີ່ນີ້. ໃນຖານະທີ່ເປັນຜູ້ຕິດຕາມພຣະເຢຊູ, ພວກເຮົາບໍ່ຕ້ອງການໃຫ້ຜູ້ໃດຜູ້ນຶ່ງ ຖືກລໍ້ລວງເຂົ້າໄປໃນການກະທຳຜິດ. ພວກເຮົາບໍ່ຢາກເຮັດໃຫ້ຜູ້ໃດສະດຸດໂດຍການຊັກຈູງພວກເຂົາເຈົ້າໃຫ້ເດີນໄປໃນເສັ້ນທາງທີ່ບໍ່ສະອາດຫຼືຈິບຫາຍ.

ມັນເປັນສິ່ງທີ່ໜ້າຢ້ານກົວທີ່ຈະເຮັດໃຫ້ຜູ້ໃດຜູ້ນຶ່ງສະດຸດ. ພວກເຮົາບໍ່ສາມາດເຂົ້າໃຈໃນຄວາມຈິງທີ່ວ່າພຣະເຢຊູຊົງໄດ້ເອົາເຣື່ອງນີ້ຢ່າງຈິງຈັງ. ມັນຕ້ອງໃຊ້ຄວາມເຊື່ອທີ່ເຕີບໃຫຍ່ເພື່ອຈະລ້າງເສັ້ນທາງແລະໃຫ້ອະພັຍ. ພຣະເຢຊູໄດ້ຊົງສັງເກດເຫັນວ່າ ການໃຫ້ອະພັຍບໍ່ແມ່ນປະສົບການທີ່ເກີດຂຶ້ນແລະເກີດຂຶ້ນພຽງຄັ້ງດຽວ. ໃນຂນະທີ່ພວກເຮົາມີສ່ວນຮ່ວມກັບຄອບຄົວແລະເພື່ອນຝູງ, ເຊັ່ນດຽວກັນກັບໃນສະພາວະການຂອງການໃຫ້ອະພັຍ, ມັນຈະບໍ່ມີທາງທີ່ພວກເຮົາສາມາດຮັກຢ່າງແທ້ຈິງໄດ້. ອັຄສາວົກ ໂປໂລ ໄດ້ເຕືອນພວກເຮົາວ່າ *"ຄວາມຮັກພຽນທົນເອົາທຸກສິ່ງ"* (1 ກຣທ 13:7). ສ່ວນນຶ່ງຂອງຄວາມອົດທົນແມ່ນຄວາມເຕັມໃຈທີ່ຈະໃຫ້ອະພັຍເລື້ອຍໆ. ພວກເຮົາບາງຄົນຕ້ອງໃຫ້ອະພັຍແລ້ວອະພັຍອີກຕໍ່ຄວາມຜິດທີ່ໄດ້ເຮັດຕໍ່ພວກເຮົາໃນວັຍເດັກຂອງພວກເຮົາ. ພວກເຮົາຈະຕ້ອງເອົາການໄກ່ເກັ່ຍແກ້ບັນຫາ, ແມ້ນວ່າພວກເຮົາຈະບໍ່ໄດ້ຕິດຕໍ່ກັບພວກຜູ້ທີ່ເຄີຍໄດ້ທຳຮ້າຍພວກເຮົາອີກຕໍ່ໄປ. ພວກຄົນອື່ນໆຕ້ອງໄດ້ບຸກໂຈມຕີກັບພວກຄົນທີ່ຕຽມປ້ອນຢ່າງຕໍ່ເນື່ອງເພື່ອໃຫ້ເກີດຄວາມຂຸ່ນເຄືອງແລະຄວາມຄຽດແຄ້ນ. ພຣະເຢຊູຊົງຕ້ອງການໃຫ້ພວກເຮົາເຮັດໃຫ້ການໃຫ້ອະພັຍເປັນນິສັຍອັນໂດດເດັ່ນຂອງການເປັນສາວົກແລະຂອງການປ່ຽນແປງ.

*ແມ່ນຫຍັງໄດ້ຊ່ອຍທ່ານໃຫ້ກາຍເປັນຄົນທີ່ໃຫ້ອະພັຍຫຼາຍຂຶ້ນກວ່າເກົ່າ?*

## 2. ລູກາ 17:5-6

*5 ຝ່າຍອັຄສາວົກໄດ້ທູນຕໍ່ອົງພຣະຜູ້ເປັນເຈົ້າວ່າ, "ຂໍໂຜດຕື່ມໃຫ້ພວກຂ້ານ້ອຍມີຄວາມເຊື່ອຫລາຍກວ່າອີກ."*
*6 ອົງພຣະຜູ້ເປັນເຈົ້າຈຶ່ງ ຊົງກ່າວວ່າ, "ຖ້າພວກທ່ານມີຄວາມເຊື່ອທໍ່ແກ່ນຜັກກາດເມັດນຶ່ງ, ທ່ານຈະບອກກົກມອນກົກນີ້ໄດ້ວ່າ 'ຈົ່ງຖອນຂຶ້ນອອກໄປປັກຢູ່ໃນທະເລ' ມັນກໍຈະຟັງຄວາມທ່ານ."*

ຄຳຕັກເຕືອນຂອງພຣະເຢຊູໃນຂໍ້ພຣະຄັມພີເຫຼົ່ານີ້ຕ້ອງເຮັດໃຫ້ບັນດາເຫຼົ່າສາວົກຢ້ານກົວເປັນອັນນຶ່ງອັນດຽວກັນ. ບໍ່ມີຜູ້ໃດຢາກທົນທຸກກັບຊະຕາກັມຂອງຫີນໂມ້ແປ້ງແລະການບໍ່ໃຫ້ອະພັຍ. **ທ່ານຕ້ອງໃຫ້ອະພັຍຊໍ້າແລ້ວຊໍ້າອີກບໍ່?** ໃຜແດ່ທີ່ໄດ້ລົ້ມລົງເຈັດເທື່ອແລ້ວລຸກຂຶ້ນມາຄັ້ງທີ່ແປດ? ນັ້ນເບິ່ງຄືວ່າຍາກແທ້ໆ! ບັນດາພວກສາວົກຮູ້ວ່າພຣະເຢຊູບໍ່ໄດ້ຊົງເວົ້າສູດຄນິດສາດໃໝ່ສຳລັບຈຳນວນຄັ້ງ(ມີຈັກເທື່ອ)ທີ່ພວກເຂົາເຈົ້າມີຄວາມຈຳເປັນຕ້ອງໃຫ້ອະພັຍ. ບາງທີພວກເຂົາເຈົ້າອາດຈະເຂົ້າໃຈຫຼາຍກວ່າທີ່ພວກເຮົາໃຫ້ຄະແນນ(credit)ແກ່ພວກເພິ່ນ. ພວກເຂົາເຈົ້າໄດ້ຮັບຮູ້ວ່າພຣະເຢຊູໄດ້ຊົງເວົ້າເຖິງການໃຫ້ອະພັຍແບບບໍ່ຈຳກັດຂອບເຂດ. ບາງທີພວກເຂົາເຈົ້າອາດເຫັນວ່ານີ້ເຂົາເຈົ້າບາດເຈັບ. ນີ້ແມ່ນຄຳສອນທີ່ຍາກທີ່ຈະເຂົ້າໃຈ. ພວກເຮົາຈະຍຶດໝັ້ນຢູ່ໃນຄວາມເຊື່ອຂອງພວກເຮົາຢ່າງສມ່ຳສເມີໄດ້ແນວໃດແລະຮັບເອົາຄວາມບໍ່ຍຸຕິທັມທີ່ບໍ່ຢຸດຢັ້ງແລະຄົງຕົວດັ່ງກ່າວ? ພວກເຮົາສາມາດໄດ້ຍິນສິ່ງນີ້ໃນຄຳຕອບຂອງພວກເຂົາເຈົ້າ:"*ຂ້າແດ່ພຣະເຈົ້າ, ຂໍໂຜດຕື່ມໃຫ້ພວກຂ້ານ້ອຍມີຄວາມເຊື່ອຫລາຍກວ່າອີກ.*"

ຂ້າພະເຈົ້າຄົງຈະນຶກພາບ(ຈິນຕະນາການ)ໄດ້ວ່າພວກເຂົາເຈົ້າຕົກຕະລຶງເທົ່າທຽມກັນເມື່ອພຣະເຢຊູໄດ້ຊົງກ່າວວ່າພວກເຂົາເຈົ້າພຽງແຕ່ຈຳເປັນຕ້ອງມີຄວາມເຊື່ອເທົ່າເມັດຜັກກາດ(mustard seed). ໃນເມື່ອທ່ານຄຶດກ່ຽວກັບເມັດຜັກກາດ, ທ່ານກຳລັງຄຶດກ່ຽວກັບບາງສິ່ງບາງຢ່າງຂະໜາດນ້ອຍຢ່າງບໍ່ໜ້າເຊື່ອ. ມັນຈະເປັນຂະໜາດຂອງເມັດງາດຳ. ພຣະເຢຊູໄດ້ຊົງກ່າວວ່າຄວາມເຊື່ອຂອງພວກເຮົາສາມາດມີຂະໜາດເທົ່າເມັດຜັກກາດ. ແນວໃດກໍ່ຕາມ, ພວກເຮົາສົມຄວນຈະມີຄວາມເຊື່ອຟັງຫຼາຍຂຶ້ນ. ການໃຫ້ອະພັຍເລີ່ມຕົ້ນດ້ວຍການເຊື່ອຟັງ. ມັນເປັນທາງເລືອກທີ່ພວກເຮົາຕ້ອງເລືອກເອົາຫຼາຍຄັ້ງແຕ່ລະມື້. ພວກເຮົາຕ້ອງເລືອກທີ່ຈະໃຫ້ອະພັຍ. ດ້ວຍການເຊື່ອຟັງ. ມັນເປັນທາງເລືອກທີ່ພວກເຮົາຕ້ອງເລືອກເອົາຫຼາຍຄັ້ງແຕ່ລະມື້. ພວກເຮົາຕ້ອງເລືອກທີ່ຈະໃຫ້ອະພັຍ. ເມື່ອພວກເຮົາເລືອກ

ເອົາການໃຫ້ອະພັຍ, ພວກເຮົາກຳລັງດຳເນີນຊີວິດໃນການເຊື່ອຟັງ. ເຖິງຢ່າງນັ້ນ, ການປະສົບກັບຄວາມຖືກຕ້ອງປອງດອງກັນຕ້ອງໃຊ້ຄວາມເຊື່ອ. **ຄວາມເຊື່ອແລະການເຊື່ອຟັງເປັນສູດ(ຕຳລາ)ແຫ່ງຄວາມສຳເລັດ.**

ຄວາມເຊື່ອພຽງເລັກນ້ອຍໄປໄດ້ໄກ, ແຕ່ພວກເຮົາພຽງແຕ່ນຶກພາບໄດ້ວ່າຈະມີຫຍັງເກີດຂຶ້ນ ຖ້າຫາກພວກເຮົາ-<u>ໃນຖານະທີ່ເປັນຜູ້ເຊື່ອ</u>-ມີຄວາມເຊື່ອທີ່ຍິ່ງໃຫຍ່. ຄຣິສຕະຈັກຈະເປັນແນວໃດ ຖ້າຫາກວ່າພວກເຮົາປ່ຽນຈາກຈຸດຄວາມເຊື່ອທີ່ພວກເຮົາໃຊ້ທຸກວັນ(ແລະໃນສ່ວນທີ່ວັດແທກໄດ້)ມາເປັນຄວາມເຊື່ອທີ່ແປກປລາດ, ຄວາມເຊື່ອທີ່ກ້າຫານ, ແລະ "ຄວາມເຊື່ອທາງໂລກ"? ຊາວໂລກຈະເວົ້າແນວໃດ ຖ້າຫາກວ່າບັນດາຜູ້ທີ່ເຊື່ອກຸ່ມນຶ່ງມີຄວາມກ້າຫານທີ່ເຊື່ອພຣະເຢຊູເພື່ອສິ່ງທີ່ຍິ່ງໃຫຍ່ແລະເປັນນິຣັນດອນ? <u>ນັ້ນຈະປ່ຽນແປງປະຕິທິນຂອງພວກເຮົາ, ງົບປະມານຂອງພວກເຮົາ, ຊັບພະຍາກອນຂອງພວກເຮົາ, ແລະນິມິດໝາຍຂອງພວກເຮົາຢ່າງໃດ</u>? ບາງທີບັນດາຜູ້ທີ່ບໍ່ເຊື່ອຢູ່ອ້ອມຮອບຄຣິສຕະຈັກຂອງພວກເຮົາຈະເວົ້າວ່າ: "ຄົນເຫຼົ່ານີ້ເຊື່ອໃນສິ່ງທີ່ພຣະເຢຊູໄດ້ຊົງກ່າວໄວ້ແທ້ໆ." **ຄວາມເຊື່ອອັນໃຫຍ່ຫຼວງທີ່ກ້າຫານມີພະລັງແລະຄວາມສາມາດທີ່ຈະເຮັດທຸກສິ່ງຕາມພຣະປະສົງແລະຈຸດປະສົງຂອງອົງພຣະເຈົ້າ.**

*ມີວິທີໃດແດ່ທີ່ພຣະເຈົ້າໄດ້ຊົງເພີ່ມຄວາມເຊື່ອຂອງທ່ານ?*

## 3. <u>ລູກາ 17:7-10</u>

7 *"ໃນພວກທ່ານທີ່ມີຂ້ອຍໃຊ້ໄຖນາຫລືລ້ຽງແກະ ເມື່ອຂ້ອຍໃຊ້ນັ້ນກັບມາແຕ່ທົ່ງ ໃຜຈະກ່າວແກ່ຂ້ອຍໃຊ້ນັ້ນວ່າ 'ຈົ່ງເຂົ້າມານັ່ງໂຕະ*
*ໂລດ'.* 8 *ຈະບໍ່ບອກຂ້ອຍໃຊ້ນັ້ນຫລືວ່າ 'ຈົ່ງຈັດແຈງໃຫ້ເຮົາກິນແລງ ແລະຄາດແອວໄວ້ປະຕິບັດເຮົາຈົນເຖິງເຮົາກິນແລະດື່ມອີ່ມແລ້ວ*
*ແລະພາຍຫລັງເຈົ້າຈຶ່ງຄ່ອຍກິນແລະດື່ມ'.* 9 *ນາຍບໍ່ຕ້ອງຂອບໃຈຕໍ່ຂ້ອຍໃຊ້ນັ້ນດອກຕີ້ ເພາະມັນໄດ້ເຮັດຕາມຄຳສັ່ງ.* 10 *ສຳລັບພວກ*
*ທ່ານກໍເໝືອນກັນນັ້ນແຫລະ ຄືເມື່ອພວກທ່ານໄດ້ເຮັດຕາມທຸກສິ່ງທີ່ຊົງສັ່ງໄວ້ນັ້ນພວກທ່ານຈົ່ງເວົ້າວ່າ 'ພວກຂ້ານ້ອຍເປັນຂ້ອຍໃຊ້ທີ່ບໍ່*
*ມີປໂຍດພວກຂ້ານ້ອຍພຽງແຕ່ໄດ້ເຮັດຕາມໜ້າທີ່ຂອງພວກຂ້ານ້ອຍເທົ່ານັ້ນ'."*

ພຣະເຢຊູໄດ້ຊົງຈົບຄຳສອນເຣື່ອງການມີຊີວິດຢູ່ໃນຣາຊອານາຈັກດ້ວຍການປຽບທຽບເລັກນ້ອຍກ່ຽວກັບການບໍລິການຮັບໃຊ້. ພຣະອົງໄດ້ຊົງສະແດງໃຫ້ເຫັນຄວາມຈຳເປັນໃຫ້ພວກເຮົາຮັບຮູ້ວ່າພວກເຮົາບໍ່ແມ່ນດາຣາ(ດາວ)ຂອງການສະແດງ. ມັນບໍ່ແມ່ນກ່ຽວກັບການຮັບຮູ້, ລາງວັນ, ຫຼືຄ່າຕອບແທນ. <u>ຊີວິດທີ່ພວກເຮົາດຳເນີນຢູ່ໃນພຣະຄຣິດຕ້ອງຕັ້ງຢູ່ເທິງພື້ນຖານຂອງຄວາມອ່ອນນ້ອມຖ່ອມຕົນແລະຄວາມເຕັມໃຈທີ່ຈະຮັບໃຊ້</u>, <u>ແລ້ວເຮັດສິ່ງພິເສດອີກໜ້ອຍນຶ່ງ</u>. ໃນແນວຄິດຂອງຊາວຕາເວັນຕົກຂອງພວກເຮົາ, ພວກເຮົາມີແນວໂນ້ມທີ່ຈະຫລຸດຜ່ອນການປຽບທຽບທີ່ພຣະເຢຊູຊົງກຳລັງອະທິບາຍ. ຄວາມເຂົ້າໃຈຂອງຊາວຕາເວັນອອກກ່ຽວກັບຜູ້ຮັບໃຊ້ມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ. ບໍ່ມີຜູ້ຮັບໃຊ້ຄົນໃດໃນວັທນະທັມນັ້ນຈະຄິດເຖິງການຮັບໃຊ້ຕົນເອງກ່ອນທີ່ຈະຮັບໃຊ້ເຈົ້ານາຍຂອງພວກເຂົາເຈົ້າ. ເຫຼົ່ານີ້ບໍ່ແມ່ນມື້ຂອງຄ່າຈ້າງຂັ້ນຕ່ຳ, ສະຫະພັນ, ໂມງເວລາ, ແລະວັນພັກຜ່ອນ. ທຸກສິ່ງທຸກຢ່າງໝູນວຽນໄປມາຢູ່ອ້ອມຮອບຄວາມພໍໃຈຂອງຜູ້ເປັນນາຍພາຍໃນບ້ານ. ເວົ້າອີກຢ່າງນຶ່ງ, **ການຮັບໃຊ້ບໍ່ໄດ້ກ່ຽວກັບຄົນຮັບໃຊ້.**

<u>ຊີວິດຂອງພວກເຮົາໃນພຣະຄຣິດບໍ່ແມ່ນກ່ຽວກັບພວກເຮົາ</u>, ຊຶ່ງເປັນສິ່ງທີ່ດີ. ຄວາມຈິງທີ່ວ່າພຣະເຢຊູຊົງເປັນຈຸດໃຈກາງຂອງທຸກສິ່ງທຸກຢ່າງທີ່ພວກເຮົາເຮັດນັ້ນ ຈະຊ່ວຍລົດແຮງກົດດັນເມື່ອພວກເຮົາລົ້ມລຸກຄຸກຄານ, ລົ້ມລົງ, ຫຼືພາດເປົ້າໝາຍ. **ມັນເປັນເຣື່ອງກ່ຽວກັບພຣະເຢຊູມາໂດຍຕລອດ.** ພວກເຮົາເປັນສ່ວນນຶ່ງຂອງທີມຄຣິສຕະຈັກ. ພວກເຮົາທຸກຄົນມີສີໄມ້ລາຍມື(ຄວາມຊຳນານ), ປະສົບການ, ແລະຄວາມຫຼົງໄຫຼທີ່ເປັນເອກກະລັກຂອງຕົນເອງໃນພັນທະກິຈຂອງພຣະເຈົ້າ. ອັຄສາວົກ ໂປໂລ ໄດ້ເຕືອນພວກເຮົາໃນພຣະຄັມພີ 1 ໂກຣິນໂທ ບົດທີ່ 12:14-18 ວ່າ: "14 *ເພາະວ່າຮ່າງກາຍນັ້ນບໍ່ໄດ້ປະກອບດ້ວຍອະໄວຍະວະອັນດຽວແຕ່ໄດ້ປະກອບດ້ວຍອະ*
*ໄວຍະວະຫລາຍອັນ.* 15 *ຖ້າຕີນຈະກ່າວວ່າ, "ເພາະຂ້ອຍບໍ່ໄດ້ເປັນມື ຂ້ອຍຈຶ່ງບໍ່ໄດ້ເປັນສ່ວນໃດໃນອະໄວຍະວະຂອງຮ່າງກາຍນັ້ນ"*
*ແລ້ວຕີນຈະບໍ່ເປັນສ່ວນໃດໃນອະໄວຍະວະຂອງຮ່າງກາຍ ເພາະເຫດເວົ້າຢ່າງນັ້ນກໍບໍ່ໄດ້.* 16 *ຖ້າຫູຈະກ່າວວ່າ, "ເພາະຂ້ອຍບໍ່ໄດ້ເປັນ*
*ຕາຂ້ອຍຈຶ່ງບໍ່ໄດ້ເປັນສ່ວນໃດໃນອະໄວຍະວະຂອງຮ່າງກາຍນັ້ນ" ຫູຈະບໍ່ໄດ້ເປັນສ່ວນໃດໃນອະໄວຍະວະຂອງຮ່າງກາຍເພາະເຫດ*
*ເວົ້າຢ່າງນັ້ນກໍບໍ່ໄດ້.* 17 *ຖ້າອະໄວຍະວະທັງໝົດໃນຮ່າງກາຍເປັນຕາ ການໄດ້ຍິນຈະຢູ່ໃສ? ຖ້າຮ່າງກາຍທັງໝົດເປັນຫູ ການດົມກິ່ນ*
*ຈະຢູ່ໃສ?.* 18 *ແຕ່ພຣະເຈົ້າໄດ້ຊົງຕັ້ງອະໄວຍະວະທຸກສ່ວນໄວ້ໃນຮ່າງກາຍຕາມຊອບພຣະທັຍຂອງພຣະອົງ."*

*ມີວິທີໃດແດ່ທີ່ພວກເຮົາສາມາດນຳກຽດສັກສີແລະຄຳຍ້ອງຍໍຈາກຕົວພວກເຮົາເອງໄປຫາພຣະເຢຊູ?*

ຖ້າຫາກວ່າພວກເຮົາມີຄວາມສັດຊື່, ພວກເຮົາຕ້ອງເວົ້າວ່າພວກເຮົາທຸກຄົນຈັດການກັບຄວາມຈໍາເປັນຂອງຕົນເອງສໍາລັບສິນເຊື່ອ(credit), ການຕົບມື, ແລະການອະນຸມັດຈາກເພື່ອນມິດສະຫາຍ, ແລະເຈົ້າໜ້າທີ່(ຜູ້ມີອໍານາດ)ຂອງພວກເຮົາ. ແຕ່ນໍ້າໃສໃຈຈິງຂອງຊີວິດນັ້ນໄດ້ຖືກພົບເຫັນຢູ່ໃນຄວາມລັບທີ່ນໍາເອົາວຽກງານຂອງພວກເຮົາໄປຢູ່ແຖວໜ້າ(ອັນດັບທີ່ນຶ່ງ). ສິ່ງທີ່ດີທີ່ສຸດທີ່ພວກເຮົາສາມາດເຮັດໄດ້ແມ່ນ**ປະຕິເສດ**ທີ່ຈະໃຫ້ຊີວິດຂອງພວກເຮົາກ່ຽວກັບພວກເຮົາ. ຖ້າຫາກວ່າຊີວິດຂອງຂ້າພະເຈົ້າຖືກອະທິບາຍດີທີ່ສຸດວ່າເປັນວຽກງານທີ່ຍິ່ງໃຫຍ່ສໍາລັບສິນເຊື່ອສ່ວນບຸກຄົນ, ຄວາມສໍາເລັດ, ການຍອມຮັບ, ແລະກຽດຕິຍົດແລ້ວ ຜູ້ຄົນຈໍານວນຫຼວງຫຼາຍຈະພາດຂໍ້ຄວາມນີ້. ຂ້າພະເຈົ້າສາມາດສິ້ນສຸດຕົກເປັນ "ຄົນຂີ້ໂກງ" ("skandalon") ແທນທີ່ຈະເປັນສາວົກ. ດັ່ງນັ້ນ, ພວກເຮົາຈໍາເປັນຕ້ອງຕັດສິນໃຈເລືອກເອົາ: **ພວກເຮົາຈະຢູ່ໃນສະພາບຂອງຄວາມພາກພູມໃຈ ແລະການບໍ່ໃຫ້ອະພັຍ ຫຼື ພວກເຮົາຈະປະຕິບັດຄວາມເຊື່ອທີ່ເຕີບໃຫຍ່?**

*ກຸ່ມຂອງພວກເຮົາໄດ້ຊ່ອຍເຫຼືອກັນແລະກັນແນວໃດໃນຄວາມເຊື່ອໃຫ້ເຕີບໃຫຍ່ຂື້ນ?*

## ນໍາໃຊ້ໃນຊີວິດ:

ຄວາມເຊື່ອຈະເຕີບໃຫຍ່ຂື້ນເມື່ອເຮົາເຊື່ອຟັງພຣະເຈົ້າດ້ວຍຄວາມຖ່ອມຕົວ. ຈົ່ງໃຊ້ນຶ່ງຂອງການນໍາໃຊ້ໃນຊີວິດດັ່ງຕໍ່ລົງໄປນີ້:

- **ໄກ່ເກັ່ງແກ້ບັນຫາ.** ທ່ານໄດ້ເຮັດໃຫ້ບາງຄົນສະດຸດບໍ່? ຖ້າເປັນໄປໄດ້, ຂໍໃຫ້ທ່ານສາມາດພົບກັນເພື່ອສົນທະນາແລະຂໍໃຫ້ໄດ້ຮັບການໃຫ້ອະພັຍ. ມີບາງຄົນທີ່ທ່ານຕ້ອງການໃຫ້ອະພັຍບໍ່? ມີຄົນທໍາຮ້າຍທ່ານ ຫຼືເຮັດຜິດຕໍ່ທ່ານບໍ່? ຈົ່ງເລືອກເພື່ອຈະເລີ່ມຕົ້ນວິທີການໃຫ້ອະພັຍບຸກຄົນນັ້ນໃນອາທິດນີ້.
- **ອະທິຖານ.** ມີບາງສິ່ງທີ່ພຣະເຈົ້າຊົງຊີ້ນໍາທ່ານໃຫ້ເຮັດ, ແຕ່ທ່ານໄດ້ພົບເຫັນວ່າມັນເປັນການຍາກທີ່ຈະກ້າວກະໂດດຂັ້ນຂອງຄວາມເຊື່ອແລະພຽງແຕ່ເຮັດສິ່ງນັ້ນ. ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ຊົງເພີ່ມພະລັງຄວາມເຊື່ອໃຫ້ແກ່ທ່ານແລະກະໂດດເຂົ້າໄປຈັດການສິ່ງນັ້ນໃຫ້ສໍາເລັດຮຽບຮ້ອຍ.
- **ກ້າສ່ຽງ.** ຈົ່ງກ້າວອອກໄປນອກເຂດຄວາມສະດວກສະບາຍຂອງທ່ານໂດຍການຮັບໃຊ້ໝູ່ຄູ່ເພື່ອນຝູງຢ່າງຟູມເຟືອຍ ຫຼືແມ້ແຕ່ໂດຍການບໍ່ເປີດເຜີຍຊື່. **ເບິ່ງວ່າມີຫຍັງເກີດຂື້ນ!**

ຊີວິດທີ່ອຸດົມສົມບູນເລີ່ມຕົ້ນດ້ວຍການຮັບໃຊ້ທີ່ຖ່ອມຕົວ. ພວກເຮົາເຮັດໃຫ້ພຣະເຈົ້າຊົງພໍພຣະທັຍເມື່ອພວກເຮົາປະຖິ້ມພາຣະສ່ວນຕົວຂອງພວກເຮົາໄວ້ໃຫ້ເປັນພາຣະຂອງພຣະອົງ. ນີ້ແມ່ນຄໍານິຍາມຂອງຄວາມເຊື່ອທີ່ເຕີບໃຫຍ່ແລ້ວ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**